## II. <u>ສະພາບການຊື້-ຂາຍຮຸ້ນ ປະຈຳວັນທີ 09 -15 ທັນວາ 2016</u>

### 1. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບຕ່າງປະເທດ</u>

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ ທຽບໃສ່ອາທິດທີ່ຜ່ານມາ ມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ** ດັດຊະນີ S&P500 ປັບຕົວເພີ່ມຂຶ້ນ 0,53%, Dow Jones 1,24% ແລະ NASDAQ 0,80%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນຕໍ່ເນື່ອງແມ່ນມາຈາກ ກະຊວງການຄ້າ ສ.ອາເມລິກາ ໄດ້ອອກມາລາຍງານວ່າ ສິນຄ້າຄ້າງສາງພາກການຄ້າຂາຍສົ່ງ ປະຈຳເດືອນ ຕຸລາ ປັບຕົວຫຼຸດລົງ 0,4% ເຊິ່ງເປັນການປັບຕົວຫຼຸດລົງຫຼາຍທີ່ສຸດໃນຮອບ 8 ເດືອນ ເຊັ່ນດຽວກັນກັບມູນຄ່າການຂາຍພາກການຄ້າຂາຍສົ່ງກໍ່ປັບຕົວເພີ່ມຂຶ້ນ 1,4% ໃນເດືອນ ຕຸລາ ເຊັ່ນກັນ ຈາກການປັບຕົວດັ່ງກ່າວ ໄດ້ກາຍເປັນການສົ່ງສັນຍານບົ່ງບອກວ່າ ພາກທຸລະກິດ ແລະ ຜູ້ບໍລິໂພກ ມີການໃຊ້ຈ່າຍເພີ່ມຂຶ້ນ ເຊິ່ງຖືວ່າເປັນປັດໃຈບວກໃຫ້ແກ່ເສດຖະກິດ ໂດຍຜົນສຳຫຼວດຂອງມະຫາວິທະຍາໄລ ມິຊິແກນ ຍັງໄດ້ເປີດເຜີຍຂໍ້ມູນຕື່ມອີກວ່າ ດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກໃນເດືອນ ທັນວາ ປັບຕົວເພີ່ມຂຶ້ນມາຢູ່ທີ່ລະດັບ 98 ເຊິ່ງສູງກວ່າທີ່ນັກວິເຄາະຄາດການທີ່ 94,5 ແລະ ຍັງສູງກວ່າລະດັບ 93,8 ຂອງເດືອນ ພະຈິກ ປະກອບກັບ ການທີ່ຜູ້ລົງທຶນເລີ່ມເຂົ້າມາເຄື່ອນໄຫວຊື້-ຂາຍໃນຕະຫຼາດຢ່າງຄຶກຄື້ນ ໄດ້ສົ່ງຜົນໃຫ້ ດັດຊະນີ Dow Jones ມີການປັບຕົວເພີ່ມຂຶ້ນໃກ້ລະດັບ 20.000 ຈຸດ ເຊິ່ງຖືວ່າເປັນລະດັບສູງສຸດໃນຮອບຫຼາຍປີ ໂດຍຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບ ສ.ອາເມລິກາ ສືບຕໍ່ປັບຕົວເພີ່ມຂຶ້ນເມື່ອທຽບກັບອາທິດທີ່ຜ່ານມາ.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ** ດັດຊະນີ ຕະຫຼາດຫຼັກຊັບ ລຸກຊຳບວກ (LUXXX) ປັບຕົວເພີ່ມຂຶ້ນ 0,86%, ຝຣັ່ງ (CAC40) 1,59%, ດັດຊະນີ ຕະຫຼາດຫຼັກຊັບ ເອີຣົບ (Eurofirst 300) 2,41%, ເຢຍລະມັນ (DAX) 2,35% ແລະ ອັງກິດ (FTSE100) 0,68%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ປັບຕົວເພີ່ມຂຶ້ນ ແມ່ນເນື່ອງຈາກ ກອງປະຊຸມຂອງທະນາຄານກາງ ເອີຣົບ ຫຼື ECB ແມ່ນມີມະຕິ ຂະຫຍາຍເວລາໃນການຊື້ພັນທະບັດຕາມນະໂຍບາຍຜ່ອນຄາຍທາງປະລິມານ ຫຼື QE ຄວບຄູ່ກັບການດຳເນີນແຜນການໃນການສືບຕໍ່ອັດຕາດອກເບ້ຍເງິນກູ້ທີ່ລະດັບ 0,25% ເພື່ອໃຊ້ເປັນເຄື່ອງມື ແລະ ນະໂຍບາຍກະຕຸ້ນເສດຖະກິດຕໍ່ໄປ ໃນຂະນະທີ່ ທະນາຄານກາງ ເຢຍລະມັນ ຫຼື Deutsche Bundesbank ກໍ່ໄດ້ປະກາດປັບເພີ່ມຄາດການເສດຖະກິດຂອງປະເທດ ເຢຍລະມັນ ຈາກເດີມ 0,2% ເປັນ 1,8% ເນື່ອງຈາກຕະຫຼາດແຮງງານຂອງປະເທດມີຄວາມເຂັ້ມແຂງ ແລະ ມີແນວໂນ້ມຂອງການຈ້າງວຽກທີ່ເພີ່ມສູງຂຶ້ນ ເຊິ່ງບັນດາຂ່າວດັ່ງກ່າວນີ້ ສົ່ງຜົນໃຫ້ຜູ້ລົງທຶນຫຼຸດຜ່ອນຄວາມກັງວົນຕໍ່ກັບສະຖານະການເສດຖະກິດຂອງກຸ່ມປະເທດໃນເອີຣົບລົງ ປະກອບກັບການທີ່ ທະນາຄານ Monte dei Paschi di Siena (MPS) ເຊິ່ງເປັນທະນາຄານ ໃຫ່ຍອັນດັບ 3 ຂອງ ປະເທດ ອິຕາລີ ໄດ້ຕັດສິນໃຈອອກແຜນລະດົມທຶນ 5 ຕື້ຢູໂຣ ພາຍໃນປີນີ້ ເພື່ອຮັກສາສະຖຽນລະພາບຄວາມເຂັ້ມແຂງໃຫ້ແກ່ຕົນເອງ ຫຼັງຈາກທີ່ ECB ກຳນົດເສັ້ນຕາຍໃຫ້ທະນາຄານຕ້ອງເລັ່ງລະດົມທຶນໃຫ້ດ່ວນທີ່ສຸດ ເຊິ່ງການຕັດສິນໃຈຂອງທະນາຄານດັ່ງກ່າວ ໄດ້ສົ່ງຜົນໃຫ້ຜູ້ລົງທຶນຫຼຸດຜ່ອນຄວາມກັງວົນຕໍ່ກັບສະຖາ ນະການສະຖາບັນການເງິນ-ການທະນາຄານ ໃນປະເທດ ອິຕາລີ ລົງໃນລະດັບໜຶ່ງ ແລະ ຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ໄດ້ສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບປັບຕົວເພີ່ມຂຶ້ນເມື່ອທຽບກັບອາທິດທີ່ຜ່ານມາ.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ຕະຫຼາດຫຼັກຊັບ ຍີ່ປຸ່ນ (NIKKEI225) ປັບຕົວເພີ່ມຂຶ້ນ 4,09%, ສສ. ຫວຽດນາມ (HOCHIMIN) 1,84%, ສ.ເກົາຫຼີ (KOSPI) 2,26%, ມາເລເຊຍ (FBMLCI) 0,66%, ໄຕ້ຫວັນ (TWSE) 1,13%, ໄທ (SET) 0,05%, ຟີລິບປິນ (PCOMP) 0,90%, ອາຊຽນ 40 (ASEAN 40) 0,15% ແລະ ອົດສະຕາລີ (S&P/ASX200) 1,94%. ຍົກເວັ້ນ ດັດຊະນີ ສປ.ຈີນ (SHANGHAI) ປັບຕົວຫຼຸດລົງ -2,54%, ສປ.ຈີນ (SHENZHEN) -5,68%, ມຽນມ້າ (MYANPIX) -0,60%, ສສ. ຫວຽດນາມ (HANOI) -1,06%,ອິນໂດເນເຊຍ (JCI) -0,05%, ຮ່ອງກົງ

(HANGSHENG) -1,51%, ສິງກະໂປ (STRAIT TIMES) -0,20% ແລະ ກຳປູເຈຍ (CSX) -0,08% ສາເຫດທີ່ເຮັດໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີສ່ວນໃຫ່ຍປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກ ຜົນສຳຫຼວດລ່າສຸດທີ່ເຮັດໂດຍ ສຳນັກງານ ຄະນະລັດຖະມົນຕີ ຍີ່ປຸ່ນ ໄດ້ລະບຸວ່າ ຄວາມເຊື່ອໝັ້ນຂອງປະຊາຊົນຍີ່ປຸ່ນທີ່ປະກອບທຸລະກິດທີ່ມີຄວາມອ່ອນໄຫວຕໍ່ເສດຖະກິດຂອງປະເທດແມ່ນມີການປັບຕົວເພີ່ມຂຶ້ນສູງກວ່າລະດັບ 50 ເຊິ່ງຢູ່ໃນລະດັບຄວາມເຊື່ອໝັ້ນທາງແງ່ບວກ ແລະ ເປັນການປັບຕົວສູງກວ່າທີ່ເຄີຍສາຫຼວດໃນເດືອນ ທັນວາ ປີກ່ອນ ເຊັ່ນດຽວກັນກັບ ມູນຄ່າການສັ່ງຊື້ເຄື່ອງຈັກໃນເດືອນ ຕຸລາ ກໍ່ປັບຕົວເພີ່ມຂຶ້ນ 4,1% ເມື່ອທຽບເປັນລາຍເດືອນ ໄດ້ກາຍເປັນການສົ່ງສັນຍານບວກ ເຖິງທ່າອ່ຽງຂອງການປັບຕົວເພີ່ມຂຶ້ນຂອງເສດຖະກິດຂອງປະເທດຍີ່ປຸ່ນ ປະກອບກັບສະຖານະການການດຳເນີນມາດຕະການກະຕຸ້ນເສດຖະກິດຂອງ ECB ທີ່ໄດ້ປະກາດລ່າສຸດ ກໍ່ໄດ້ກາຍເປັນປັດໃຈບວກໃຫ້ແກ່ຜູ້ລົງທຶນໃນຕະຫຼາດຫຼັກຊັບອາຊີ ເຊັ່ນກັນ ແລະ ທັງສິ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີສ່ວນໃຫ່ຍປັບຕົວເພີ່ມຂຶ້ນເມື່ອທຽບກັບອາທິດກ່ອນ.

2. **<u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.031,74 ຈຸດ ເພີ່ມຂຶ້ນ 1,74% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 76.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 370,02 ລ້ານກີບ ເພີ່ມຂຶ້ນ 19,96% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 55,77% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.032 ກີບ ຫຼຸດລົງ 26 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 51.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 258,62 ລ້ານກີບ ເພີ່ມຂຶ້ນ 3.571,43% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດ ກວມເອົາ 25,04% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,41%[1].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.995 ກີບ ຫຼຸດລົງ 1 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 19.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 98,9 ລ້ານກີບ ຫຼຸດລົງ 67,06% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດ ກວມເອົາ 66,74% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,39%[2].

ຮຸ້ນຂອງບໍລິສັດ ລາວເວິນ ມະຫາຊົນ (LWPC) ມີລາຄາປິດ 5.900 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ. ໂດຍອາທິດນີ້ຮຸ້ນ LWPC ບໍ່ສາມາດຈັບຄູ່ຊື້-ຂາຍກັນໄດ້. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,79%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາປິດ 2.500 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານການຊື້-ຂາຍທັງໝົດ 5.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 12,5 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTLທັງໝົດ . ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 12,66%[4].

---

ລາຄາສະເລຍແມ່ນລາຄາທີ່ສະເລຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[1]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສາລັບຜູ້ລົງທຶນປະເພດສະຖາບັນ;

[2]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສາລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.000 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ. ໂດຍອາທິດນີ້ຮຸ້ນ SVN ບໍ່ສາມາດຈັບຄູ່ຊື້-ຂາຍກັນໄດ້. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[5].

**ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**



ທ. ບຸນຈິງ ກອງຄຳ

## ຕາຕະລາງ 1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາສະເລຍ (ກີບ) |
| BCEL | 1.400 | 7.080.000 | 5.057 | 51.400 | 258.620.000 | 5.032 | 3.571,43 | 3.552,82 | -26 |
| EDL-GEN | 60.100 | 300.230.000 | 4.996 | 19.800 | 98.900.000 | 4.995 | -67,05 | -67,06 | -1 |
| LWPC | 100 | 590.000 | 5.900 | 0 | 0 | 5.900 | -100 | -100 | - |
| PTL | 100 | 250.000 | 2.500 | 5.000 | 12.500.000 | 2.500 | 4.900,00 | 4.900,00 | - |
| SVN | 100 | 300.000 | 3.000 | 0 | 0 | 3.000 | -100 | -100 | - |
| **ທັງໝົດ** | 61.800 | 308.450.000 | 0 | **76.200** | **370.020.000** | | 23,30 | 19,96 | |

## ແຜນວາດ 1: ດັດຊະນີຕະຫຼາດຫຼັກຊັບລາວ
## (11 ມັງກອນ 2011 – 15 ທັນວາ 2016)




## ແຜນວາດ 2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ
## ( 24 – 8 ທັນວາ 2016)

ຫົວໜ່ວຍ: ລ້ານ ກີບ




---

[5] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

### ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ

| ຊື່ດັດຊະນີ | ປະເທດ | ດັດຊະນີໃນອາທິດນີ້ | ດັດຊະນີໃນອາທິດກ່ອນ | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | ສ.ອາເມລິກາ | 19.792,53 | 19.549,62 | 242,91 | 1,24 |
| NASDAQ | ສ.ອາເມລິກາ | 5.436,67 | 5.393,76 | 42,91 | 0,80 |
| S&P500 | ສ.ອາເມລິກາ | 2.253,28 | 2.241,35 | 11,93 | 0,53 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.406,67 | 1.373,63 | 33,04 | 2,41 |
| DAX | ເຢຍລະມັນ | 11.244,84 | 10.986,69 | 258,15 | 2,35 |
| FTSE100 | ອັງກິດ | 6.949,19 | 6.902,23 | 46,96 | 0,68 |
| CAC40 | ຝຣັ່ງ | 4.769,24 | 4.694,72 | 74,52 | 1,59 |
| LUXXX | ລຸກຊໍາບວກ | 1.700,67 | 1.686,09 | 14,57 | 0,86 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 19.253,61 | 18.496,69 | 756,92 | 4,09 |
| KOSPI | ສ.ເກົາຫຼີ | 2.036,87 | 1.991,89 | 44,98 | 2,26 |
| HANGSHENG | ຮ່ອງກົງ | 22.456,62 | 22.800,92 | (344,30) | (1,51) |
| TWSE | ໄຕ້ຫວັນ | 9.368,52 | 9.263,89 | 104,63 | 1,13 |
| SHANGHAI | ສປ. ຈີນ | 3.140,53 | 3.222,24 | (81,71) | (2,54) |
| SHENZHEN | ສປ. ຈີນ | 1.971,68 | 2.090,33 | (118,65) | (5,68) |
| S&P/ASX200 | ອົດສະຕາລີ | 5.584,60 | 5.478,10 | 106,50 | 1,94 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | ອາຊີ | 8.982,25 | 8.968,79 | 13,46 | 0,15 |
| STRAIT TIME | ສິງກະໂປ | 2.954,06 | 2.959,84 | (5,78) | (0,20) |
| SET | ໄທ | 1.521,25 | 1.520,53 | 0,72 | 0,05 |
| FBMLCI | ມາເລເຊຍ | 1.643,29 | 1.632,47 | 10,82 | 0,66 |
| JCI | ອິນໂດເນເຊຍ | 5.262,82 | 5.265,37 | (2,55) | (0,05) |
| PCOMP | ຟີລິບປິນ | 6.928,34 | 6.866,81 | 61,53 | 0,90 |
| HOCHIMIN | ສສ. ຫວຽດນາມ | 665,14 | 653,11 | 12,03 | 1,84 |
| HANOI | ສສ. ຫວຽດນາມ | 78,57 | 79,41 | (0,84) | (1,06) |
| CSX | ກໍາປູເຈຍ | 313,54 | 313,79 | (0,25) | (0,08) |
| LSX | ສປປ. ລາວ | 1.004,54 | 1.028,48 | (23,94) | (2,33) |
| MYANPIX | ມຽນມ້າ | 623,67 | 627,42 | (3,75) | (0,60) |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | ສ. ອາເມລິກາ | 3.777,77 | 3.772,18 | 5,59 | 0,15 |
| SET BANK | ໄທ | 482,48 | 4820,16 | 0,32 | 0,07 |